ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 556/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 17 JUL 2018

# ຂໍ້ຕົກລົງ
# ວ່າດ້ວຍເງິນແຮຝາກບັງຄັບ

- ອີງຕາມກົດໝາຍວ່າດ້ວຍ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ທຫລ, ລົງວັນທີ 14 ຕຸລາ 1999;
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມລະບຽບກ່ຽວກັບເງິນແຮຝາກບັງຄັບ ສະບັບເລກທີ 01/ທຫລ, ລົງວັນທີ 21 ເມສາ2014;
- ອີງຕາມຂໍ້ຕົກລົງກ່ຽວກັບຫຼັກການຮັກສາລະດັບເງິນແຮຝາກບັງຄັບ ສະບັບເລກທີ 877/ທຫລ, ລົງວັນທີ 30 ຕຸລາ 2008;
- ອີງຕາມການຄົ້ນຄວ້ານຳສະເໜີຂອງກົມກ່ຽວຂ້ອງ.

## ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ຕົກລົງ:

## ໝວດທີ 1
## ຂໍ້ກຳນົດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດ ຫຼັກການກ່ຽວກັບການປະຕິບັດເງິນແຮຝາກບັງຄັບ ຊຶ່ງທະນາຄານທຸລະກິດຕ້ອງແຮໄວ້ຢູ່ທະນາຄານແຫ່ງ ສປປ ລາວ ເພື່ອໃຫ້ສອດຄ່ອງກັບນະໂຍບາຍເງິນຕາທີ່ທະນາຄານແຫ່ງ ສປປ ລາວ ວາງອອກໃນແຕ່ລະໄລຍະ.

**ມາດຕາ 2 ນິຍາມຄຳສັບ**

ຄຳສັບຕ່າງໆຢູ່ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້:

- "ເງິນແຮຝາກບັງຄັບ" ໝາຍເຖິງຈຳນວນເງິນ ທີ່ທະນາຄານທຸລະກິດຕ້ອງແຮໄວ້ຢູ່ທະນາຄານແຫ່ງ ສປປ ລາວ ໃນອັດຕາສ່ວນໃດໜຶ່ງ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ; ຈຳນວນເງິນແຮດັ່ງກ່າວ ແມ່ນອັດຕາສ່ວນຈາກເງິນຝາກຂອງລູກຄ້າທະນາຄານທຸລະກິດ ແລະ ໜີ້ສິນໄລຍະສັ້ນອື່ນໆຂອງທະນາຄານທຸລະກິດ;

– “ເງິນຝາກຂອງລູກຄ້າທະນາຄານທຸລະກິດ” ໝາຍເຖິງເງິນຝາກທຸກປະເພດທີ່ທະນາຄານທຸລະກິດຮັບຝາກຈາກລູກຄ້າ;

– “ໜີ້ສິນໄລຍະສັ້ນອື່ນໆ” ໝາຍເຖິງການກູ້ຢືມທຸກຮູບແບບຂອງທະນາຄານທຸລະກິດ ທັງຈາກພາຍໃນ ແລະ ຕ່າງປະເທດ ໃນໄລຍະເວລາກູ້ຕໍ່າກວ່າ 1 ປີເປັນຕົ້ນ ການອອກຫຼັກຊັບ, ການກູ້ຢືມ ແລະ ອື່ນໆ;

– “ໄລຍະຖານ” ໝາຍເຖິງຮອບໄລຍະເວລາເປັນຈຳນວນວັນ ເພື່ອໃຊ້ຄິດໄລ່ເງິນແຮຝາກບັງຄັບໃຫ້ແກ່ຮອບໄລຍະເວລາຮັກສາ;

– “ໄລຍະຮັກສາ” ໝາຍເຖິງຮອບໄລຍະເວລາເປັນຈຳນວນວັນທີ່ຕ້ອງຮັກສາເງິນແຮຝາກບັງຄັບໃຫ້ພຽງພໍ ແລະ ຍັງແມ່ນໄລຍະຖານ ເພື່ອໃຊ້ຄິດໄລ່ເງິນແຮຝາກບັງຄັບສຳລັບໄລຍະຮັກສາຮອບຕໍ່ໄປ;

– “ຫຼັກຊັບທີ່ບໍ່ມີພາລະຜູກພັນ ຫຼື ພັນທະບັດ” ໝາຍເຖິງ ພັນທະບັດທະນາຄານແຫ່ງ ສປປ ລາວ ຫຼື ພັນທະບັດກະຊວງການເງິນ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ ຊຶ່ງພັນທະບັດດັ່ງກ່າວຕ້ອງບໍ່ຖືກນຳໄປເຮັດທຸລະກຳທາງການເງິນອື່ນ (ຂາຍຝາກ, ຄ້ຳປະກັນເງິນກູ້, ປະກອບທຶນ ແລະ ອື່ນໆ ທີ່ເປັນພາລະຜູກພັນໃນທຸລະກຳດັ່ງກ່າວນັ້ນ).

**ມາດຕາ 3 ປະເພດເງິນຝາກ, ໜີ້ສິນຂອງທະນາຄານທຸລະກິດ ທີ່ຕ້ອງແຮຝາກບັງຄັບ**

– ເງິນຝາກທຸກປະເພດທີ່ທະນາຄານທຸລະກິດຮັບຝາກຈາກລູກຄ້າ ຫລື ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ ແມ່ນຕ້ອງໄດ້ແຮຝາກບັງຄັບ ໄວ້ນຳທະນາຄານແຫ່ງ ສປປ ລາວ ຕາມອັດຕາສ່ວນ ທີ່ທະນາຄານແຫ່ງ ສປປ ລາວ ກຳນົດອອກ;

– ໜີ້ນສິນໄລຍະສັ້ນທັງໝົດຂອງທະນາຄານທຸລະກິດ ຫຼື ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ ຕ້ອງແຮຝາກບັງຄັບໄວ້ນຳທະນາຄານແຫ່ງ ສປປ ລາວ ຕາມອັດຕາສ່ວນທີ່ທະນາຄານແຫ່ງ ສປປ ລາວ ກຳນົດອອກໃນແຕ່ລະໄລຍະ.

**ມາດຕາ 4 ໄລຍະຖານ, ໄລຍະຮັກສາ ແລະ ອັດຕາສ່ວນເງິນແຮຝາກບັງຄັບ**

– ໄລຍະຖານ ແລະ ໄລຍະຮັກສາ ທີ່ໃຊ້ຄິດໄລ່ເງິນແຮຝາກບັງຄັບ ແມ່ນຮອບໄລຍະເວລາ 14 ວັນ ຫຼື ຕາມການກຳນົດຂອງ ທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ;

– ທະນາຄານແຫ່ງ ສປປ ລາວ ເປັນຜູ້ກຳນົດອັດຕາສ່ວນເງິນແຮຝາກບັງຄັບໃນແຕ່ລະໄລຍະ.

**ມາດຕາ 5 ສະກຸນເງິນທີ່ຕ້ອງແຮຝາກບັງຄັບ**

ທະນາຄານທຸລະກິດຕ້ອງແຮຝາກບັງຄັບ ໄວ້ນຳທະນາຄານແຫ່ງ ສປປ ລາວ ທັງເງິນກີບ ແລະ ເງິນຕາຕ່າງປະເທດຕາມທີ່ຕົນຮັບຝາກ ແລະ ໜີ້ສິນໄລຍະສັ້ນອື່ນໆຂອງຕົນທີ່ຕົນມີ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ.

## ໝວດທີ 2
## ການຄິດໄລ່ ແລະ ການຮັກສາເງິນແຮຝາກບັງຄັບ

**ມາດຕາ 6 ວິທີການຄິດໄລ່ເງິນແຮຝາກບັງຄັບ**

ການຄິດໄລ່ເງິນແຮຝາກບັງຄັບປະຕິບັດຕາມວິທີການດັ່ງລຸ່ມນີ້:

6.1 ຈຳນວນເງິນທີ່ຕ້ອງແຮໄວ້ໃນໄລຍະຮັກສາເທົ່າກັບ ຜົນລວມຂອງຍອດເຫຼືອບັນຊີເງິນຝາກສະເລ່ຍ ແລະ ບັນຊີໜີ້ສິນໄລຍະສັ້ນອື່ນໆສະເລ່ຍ ຄູນໃຫ້ອັດຕາສ່ວນເງິນແຮຝາກບັງຄັບ;

6.2 ການຄິດໄລ່ຍອດເຫຼືອບັນຊີເງິນຝາກສະເລ່ຍ ແມ່ນໃຫ້ລວມເອົາຍອດເຫຼືອບັນຊີເງິນຝາກທ້າຍແຕ່ລະມື້ ຫານໃຫ້ຈໍານວນວັນຂອງໄລຍະຖານ;

6.3 ການຄິດໄລ່ຍອດເຫຼືອບັນຊີໜີ້ສິນໄລຍະສັ້ນອື່ນໆ ສະເລ່ຍ ແມ່ນໃຫ້ລວມເອົາຍອດເຫຼືອບັນຊີໜີ້ສິນໄລຍະສັ້ນອື່ນໆທ້າຍແຕ່ລະມື້ ຫານໃຫ້ຈໍານວນວັນຂອງໄລຍະຖານ.

**ມາດຕາ 7 ການນໍາໃຊ້ເງິນແຮຝາກບັງຄັບ**

ທະນາຄານທຸລະກິດສາມາດນໍາໃຊ້ບັນຊີເງິນແຮຝາກບັງຄັບເຂົ້າໃນການຊໍາລະສະສາງ ແລະ ດັດສົມສະພາບຄ່ອງໃນລະຫວ່າງມື້ໄດ້; ແຕ່ລະດັບບັນຊີເງິນແຮຝາກບັງຄັບໃນແຕ່ລະທ້າຍມື້ຕ້ອງເທົ່າກັບລະດັບເງິນແຮຝາກບັງຄັບທີ່ຕ້ອງໄດ້ຮັກສາໄວ້ໃນແຕ່ລະໄລຍະຮັກສາ.

**ມາດຕາ 8 ການຮັກສາລະດັບເງິນແຮຝາກບັງຄັບ**

ທະນາຄານທຸລະກິດຈະຕ້ອງຮັກສາລະດັບເງິນແຮຝາກບັງຄັບຕາມລະບຽບນີ້ຢ່າງເຄັ່ງຄັດ, ຖ້າທະນາຄານທຸລະກິດໃດໜຶ່ງຮັກສາຍອດເຫຼືອບັນຊີເງິນຝາກໃນແຕ່ລະທ້າຍມື້ ໃນໄລຍະຮັກສາສູງກວ່າລະດັບເງິນແຮຝາກບັງຄັບຢູ່ທະນາຄານແຫ່ງ ສປປ ລາວ ຖືວ່າເງິນແຮຝາກບັງຄັບເກີນ ແລະ ກົງກັນຂ້າມ ຖ້າຕໍ່າກວ່າຖືວ່າເງິນແຮຝາກບັງຄັບບໍ່ພໍ. ເງິນແຮຝາກບັງຄັບເກີນ ຫຼື ບໍ່ພໍແມ່ນຈະຕ້ອງໄດ້ຮັບການດັດສົມຕາມທີ່ກໍານົດໄວ້ໃນລະບຽບກ່ຽວກັບການດັດສົມສະພາບຄ່ອງທ້າຍມື້ທີ່ ທະນາຄານແຫ່ງ ສປປ ລາວ ກໍານົດອອກໃນແຕ່ລະໄລຍະ.

**ມາດຕາ 9 ຫຼັກການຮັກສາລະດັບເງິນແຮຝາກບັງຄັບ**

9.1 ທະນາຄານທຸລະກິດຕ້ອງຮັກສາຈໍານວນເງິນແຮຝາກບັງຄັບໄວ້ທະນາຄານແຫ່ງ ສປປ ລາວ ໃຫ້ຄົບຖ້ວນຢູ່ໃນລະດັບທີ່ຮັກສາຕາມຫຼັກການຄື ຍອດເຫຼືອບັນຊີເງິນແຮຝາກບັງຄັບຢູ່ທະນາຄານແຫ່ງ ສປປ ລາວ ໃນແຕ່ລະທ້າຍມື້ຂອງແຕ່ລະໄລຍະຮັກສາ ບໍ່ໃຫ້ຕໍ່າກວ່າລະດັບເງິນແຮຝາກບັງຄັບທີ່ຕ້ອງຮັກສາໄວ້ໃນແຕ່ລະໄລຍະຮັກສາ;

9.2 ທະນາຄານທຸລະກິດຕ້ອງຮັກສາຈໍານວນເງິນແຮຝາກບັງຄັບໃນແຕ່ລະທ້າຍມື້ໄວ້ນໍາທະນາຄານແຫ່ງ ສປປ ລາວ ໃຫ້ຄົບຖ້ວນ ຊຶ່ງປະກອບມີສອງພາກສ່ວນຄື: ເງິນສົດ ແລະ ຫຼັກຊັບທີ່ບໍ່ມີພາລະຜູກພັນ ຫຼື ພັນທະບັດດັ່ງນີ້:

- ເງິນສົດ ໃນອັດຕາສ່ວນໃດໜຶ່ງ ຕາມການກໍານົດຂອງທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ;
- ຫຼັກຊັບທີ່ບໍ່ມີພາລະຜູກພັນ ຫຼື ພັນທະບັດ ໃນອັດຕາສ່ວນທີ່ເຫຼືອຈາກອັດຕາສ່ວນເງິນສົດ ຊຶ່ງຂຶ້ນກັບການກໍານົດຂອງທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ.

**ມາດຕາ 10 ການລາຍງານ**

ທະນາຄານທຸລະກິດຈະຕ້ອງສົ່ງໃບລາຍງານ ຕາມແບບຟອມຂອງກົມບໍລິການທະນາຄານໃຫ້ກົມບໍລິການທະນາຄານ ຫຼື ສາຂາຂອງທະນາຄານແຫ່ງ ສປປ ລາວ ບ່ອນສໍານັກງານໃຫຍ່ຕັ້ງຢູ່ທຸກໆສອງອາທິດຕໍ່ຄັ້ງ ແລະ ພາຍໃນ 2 ວັນລັດຖະການ ນັບຈາກມື້ສຸດທ້າຍຂອງໄລຍະຮັກສາ.

**ມາດຕາ 11 ການຈັດຕັ້ງປະຕິບັດ**

11.1 ທະນາຄານທຸລະກິດມີໜ້າທີ່ຄິດໄລ່ ແລະ ລາຍງານຍອດເງິນຝາກສະເລ່ຍ ແລະ ເງິນກູ້ໄລຍະສັ້ນສະເລ່ຍ ໃນໄລຍະຖານໃຫ້ກົມບໍລິການທະນາຄານ ແລະ ສາຂາຂອງທະນາຄານແຫ່ງ ສປປ ລາວ

(ຕາມແບບລາຍງານຂອງກົມບໍລິການ) ພາຍໃນສອງວັນລັດຖະການນັບຈາກມື້ສິ້ນສຸດຂອງໄລຍະຮັກສາເພື່ອກຳນົດຈຳນວນເງິນແຮຝາກບັງຄັບ.

11.2 ກົມບໍລິການທະນາຄານ ແລະ ສາຂາທະນາຄານແຫ່ງ ສປປ ລາວ ມີໜ້າທີ່ກວດກາຄືນການຄິດໄລ່ ແລະ ແຈ້ງຈຳນວນເງິນແຮຝາກບັງຄັບໃນໄລຍະຮັກສາຮອບຕໍ່ໄປໃຫ້ ທະນາຄານທຸລະກິດພາຍໃນ 3 ວັນລັດຖະການ ນັບຈາກມື້ສິ້ນສຸດຂອງໄລຍະຮັກສາ; ພິຈາລະນາກໍລະນີເງິນແຮຝາກບັງຄັບບໍ່ພໍ, ສັງລວມລາຍງານຂອງບັນດາທະນາຄານທຸລະກິດໃນການປະຕິບັດເງິນແຮຝາກບັງຄັບໃຫ້ກົມຄຸ້ມຄອງທະນາຄານທຸລະກິດພາຍໃນ 5 ວັນລັດຖະການນັບຈາກມື້ສິ້ນສຸດຂອງໄລຍະຮັກສາ;

11.3 ກົມບໍລິການທະນາຄານແຫ່ງ ສປປ ລາວ ອອກບົດແນະນຳກ່ຽວກັບການຈັດຕັ້ງປະຕິບັດເງິນແຮຝາກບັງຄັບຂອງທະນາຄານທຸລະກິດ ພ້ອມທັງກຳນົດແບບລາຍງານເພື່ອໃຫ້ທະນາຄານທຸລະກິດຈັດຕັ້ງປະຕິບັດ;

11.4 ກົມຄຸ້ມຄອງທະນາຄານທຸລະກິດເກັບກຳ ແລະ ກວດກາການຈັດຕັ້ງປະຕິບັດການຮັກສາເງິນແຮຝາກບັງຄັບ ບົນພື້ນຖານການລາຍງານຂອງກົມບໍລິການທະນາຄານ ແລະ ສາຂາທະນາຄານແຫ່ງ ສປປ ລາວ ພ້ອມທັງລາຍງານຜູ້ວ່າການທະນາຄານແຫ່ງ ສປປ ລາວ ແລະ ສຳເນົາສົ່ງກົມນະໂຍບາຍເງິນຕາ;

11.5 ກົມນະໂຍບາຍເງິນຕາ ມີໜ້າທີ່ຄົ້ນຄວ້າປັບປຸງອັດຕາສ່ວນເງິນແຮຝາກບັງຄັບ, ຈຳນວນວັນໃນໄລຍະຮັກສາ, ຄົ້ນຄວ້າອັດຕາປັບໄໝໃນກໍລະນີເງິນແຮຝາກບັງຄັບບໍ່ພໍ ເພື່ອສະເໜີຜູ້ວ່າການທະນາຄານແຫ່ງ ສປປ ລາວ ພິຈາລະນາຕົກລົງ;

11.6 ກົມບັນຊີແລະການເງິນທະນາຄານແຫ່ງ ສປປ ລາວ ຄົ້ນຄວ້າອອກບົດແນະນຳການກຳນົດເລກໝາຍບັນຊີເງິນແຮຝາກບັງຄັບໃຫ້ຄົບຖ້ວນ ແລະ ທັນເວລາ.

**ມາດຕາ 12 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນລະບຽບເງິນແຮຝາກບັງຄັບ ສະບັບເລກທີ 01/ທຫລ, ລົງວັນທີ 21 ເມສາ 2014.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ສົມພາວ ໄຟສິດ